Sombounsak and Xayyalath. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol.6, Issue 2: Page 17 - 29.

ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 2, ກໍລະກົດ - ທັນວາ 2020, ເລກທະບຽນ ISSN 2521-0653

# ສະພາບການສົ່ງອອກເຂົ້າຂອງແຂວງ ສະຫວັນນະເຂດ[1]

**ພູມໄຊດາວອນ ສິມບຸນສັກ*ແລະ ໄກສອນ ໄຊຍະລາດ**

*ພາກວິຊາ ບໍລິຫານການຂົນສົ່ງ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ*

## ບົດຄັດຫຍໍ້

ການສຶກສາສະພາບການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດປະກອບມີ 3 ຈຸດປະສົງຄື 1) ເພື່ອອະທິບາຍສະພາບການສົ່ງອອກຜະລິດຕະພັນເຂົ້າຂອງ ແຂວງສະຫວັນນະເຂດ, 2) ເພື່ອປະເມີນຄວາມອາດສາມາດໃນການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ, 3) ເພື່ອວິເຄາະປັດໄຈທີ່ມີຜົນກະທົບຕໍ່ມູນຄ່າການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫັວນນະເຂດ. ການສຶກສາຄັ້ງນີ້ໃຊ້ຂໍ້ມູນທຸຕິຍະພູມເປັນຫຼັກ ເຊິ່ງເປັນຂໍ້ມູນລາຍເດືອນແຕ່ປີ 2015 - 2018, ເປັນການວິເຄາະແບບປຽບທຽບຕົວເລກການປ່ຽນແປງຂອງການນໍາເຂົ້າ-ສົ່ງອອກຂອງແຕ່ລະປີ ເພື່ອອະທິບາຍພາບລວມ ແລະ ວິເຄາະຄວາມໄດ້ປຽບໃນການສົ່ງອອກ, ວິເຄາະສ່ວນຄອງຕະຫຼາດຄົງທີ່ໂດຍການປຽບທຽບມູນຄ່າການສົ່ງອອກ ແລະ ນໍາເຂົ້າສິນຄ້າລະຫວ່າງແຂວງທຽບໃສ່ຂອງປະເທດ, ປຽບທຽບລະຫວ່າງມູນຄ່າການສົ່ງອອກເຂົ້າຂອງປະເທດລາວກັບປະເທດອື່ນ, ການທົດສອບປັດໄຈທາງເສດຖະກິດ ທີ່ມີຜົນຕໍ່ມູນຄ່າການສົ່ງອອກເຂົ້າດ້ວຍສົມຜົນຖົດຖອຍ.

ຜົນການວິເຄາະຄວາມສາມາດໃນການສົ່ງອອກພົບວ່າ ດັດສະນີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໂດຍລວມຂອງແຂວງສະຫວັນນະເຂດໄປຍັງປະເທດຈີນ ມີຄ່າຫຼາຍກວ່າ 1 ສະແດງວ່າແຂວງສະຫວັນນະເຂດຢູ່ໃນຖານະທີ່ໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໄປຍັງຕະຫຼາດຈີນ, ການວິເຄາະສ່ວນແບ່ງຕະຫຼາດຄົງທີ່ ພົບວ່າປັດໄຈການຂະຫຍາຍຕົວຂອງຕະຫຼາດ ແລະ ປັດໄຈຄວາມສາມາດໃນການແຂ່ງຂັນ ມີຜົນກະທົບຕໍ່ການປ່ຽນແປງຂອງມູນຄ່າການສົ່ງອອກຜະລິດຕະພັນເຂົ້າ ເຊິ່ງມີມູນຄ່າເທົ່າກັບ 314,938,540 ໂດລາ ແລະ 5,478,972 ໂດລາ ຕາມລໍາດັບ.

ຜົນການສຶກສາປັດໄຈທີ່ມີຜົນຕໍ່ມູນຄ່າການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ພົບວ່າປະລິມານການສົ່ງອອກຜະລິດຕະພັນເຂົ້າ, ດັດສະນີລາຄາການບໍລິໂພກໝວດສະບຽງອາຫານ ແລະ ອັດຕາການປ່ຽນແປງລວມຂອງເງິນເຟີແຂວງສະຫວັນນະເຂດມີຄວາມສໍາພັນກັບມູນຄ່າການສົ່ງອອກດ້ວຍ $R^2$ = 94% ແລະ ຕົວປ່ຽນອິດສະຫຼະ ທັງສາມຕົວສາມາດອະທິບາຍມູນຄ່າການສົ່ງອອກຜະລິດຕະພັນເຂົ້າໄດ້ 88% ແລະ ຄ່າ F = 44.33, P-value = 0.000 ສະແດງໃຫ້ເຫັນວ່າ ສົມຜົນພະຍາກອນມູນຄ່າການສົ່ງອອກສາມາດໃຊ້ໄດ້ ດ້ວຍລະດັບຄວາມເຊື່ອໝັ້ນ 95%.

**ຄໍາສໍາຄັນ:** ສະພາບ, ການສົ່ງອອກ, ເຂົ້າ

---

[1] ***ການອ້າງອີງພາສາລາວ:***

ພູມໄຊດາວອນ ສິມບຸນສັກ ແລະ ໄກສອນ ໄຊຍະລາດ. (2020). ສະພາບການສົ່ງອອກເຂົ້າຂອງແຂວງສະຫວັນນະເຂດ. ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ສະບັບທີ: 6, ເຫຼັ້ມ 2, ໜ້າທີ: 17 - 29.

* ***ຕິດຕໍ່ພົວພັນ:***

ພູມໄຊດາວອນ ສິມບຸນສັກ, ພາກວິຊາ ບໍລິຫານການຂົນສົ່ງ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ,
Tel: +856 020 29997166, E-mail: nid.sbs@gmail.com.

# Rice Export Situation in Savannakhet Province

**Phoumsaydavone SOMBOUNSAK[2] and Kaysone XAYYALATH**

*Department of Logistic Management, Faculty of Business Administration Savannakhet University.*

**ABSTRACT**

The study of rice export situation in Savannakhet Province has three objectives: 1. To explain rice export situation in Savannakhet Province, 2. To assess capability of rice export in Savannakhet Province, and 3. To analyze factors affecting rice exports in Savannakhet Province. This study used a monthly data from 2015-2018. It is a comparative analysis of the yearly import and export conversion figures, to explain the overview and analyze export advantages, comparative analyzed of constant market share of import and export between province to the country. Compare the value rice export of Laos with that of others, testing the economic factors that affect the value of exports through a regression.

Capability analysis of export shown that revealed comparative advantage of rice export from Savannakhet province to China was greater than 1 it means that Savannakhet was advantageous in export rice to China. Constant market share analysis found that factor of expand market and factor of competitive capability were reflexing to changing of rice export value were 314,938,540$ and 5,478,972$ respectively.

The study on factors effecting to rice export of Savannakhet province found that quantity of rice export, price index of food consumption and rate inflation of total exchange were associated to each variable with 94% and all of three variables can explain rice export value by R= 88% and F= 44.33, p-value= 0.000 means that by 95% of significant level the equation can be used.

**Keywords:** Situation, Export, Rice

[2] ***Correspondence:***

*Phoumsaydavone SOMBOUNSAK, Department of Logistic Management, Faculty of Business Administration, Savannakhet University, E-mail: nid.sbs@gmail.com. Tel: +856 020 29997166*

## 1. ພາກສະເໜີ

ເຂົ້າເປັນສິນຄ້າບໍລິໂພກຂັ້ນພື້ນຖານ ແລະ ເປັນ ສິນຄ້າທີ່ຄົນຂາດບໍ່ໄດ້, ປະເທດຜູ້ຜະລິດໃນປະຈຸບັນ ສ່ວນໃຫຍ່ຈະເປັນປະເທດກຳລັງພັດທະນາທີ່ຈະເຮັດ ການຜະລິດເພື່ອການສົ່ງອອກໄປຍັງປະເທດພັດທະນາ ແລ້ວ ເຊິ່ງປະເທດລາວກໍ່ເປັນປະເທດຜູ້ຜະລິດເຂົ້າ ສ່ວນໃຫຍ່ເປັນການຜະລິດເພື່ອບໍລິໂພກ ແລະ ກໍ່ມີ ການສົ່ງອອກຈຳນວນໜຶ່ງ. ໃນສ່ວນແບ່ງການຕະຫຼາດ ຂອງໂລກ ສິນຄ້າ ແລະ ການບໍລິການທີ່ ສປປ ລາວ ສົ່ງອອກນັ້ນປະກອບມີ 10 ຂະແໜງການໃຫຍ່ໆ ຄື ກະສິກຳ, ແຜ່ນແພ, ຫີນ, ແຮ່ທາດ, ໂລຫະ, ສານເຄມີ , ພາຫະນະ, ເຄື່ອງຈັກ, ເຄື່ອງໃຊ້ໄຟຟ້າ ແລະ ການ ບໍລິການ. ໃນນັ້ນ ສ ປປ ລາວ ມີສ່ວນແບ່ງການຕະ ຫຼາດຂອງໂລກ ທີ່ສົ່ງອອກຫຼາຍທີ່ສຸດ ແມ່ນສ່ວນຫຼາຍ ຈະເປັນ ສິນຄ້າຂະແໜງກະສິກຳ, ຂະແໜງແຮ່ທາດ ແລະ ຂະແໜງໂລຫະ. ໃນສ່ວນແບ່ງການຕະຫຼາດຂອງ ໂລກ ເຫັນວ່າ ສ ປປ ລາວ ບໍ່ມີການສົ່ງອອກ ປະເພດ ຍານພາຫະນະ ແລະ ປະເພດເຄື່ອງຈັກລາຍລະອຽດດັ່ງ ຮູບ 01




ຮູບ 01: ສ່ວນແບ່ງການຕະຫຼາດໂລກທີ່ ສ ປປ ລາວ ສົ່ງອອກ

ແຫຼ່ງຂໍ້ມູນ: (Atlas of Economics Complexity, 2017)

ນະໂຍບາຍການລົງທຶນດ້ານກະສິກຳ ຂອງ ສ ປປ ລາວ ເປັນການເປີດໂອກາດ ໃຫ້ແກ່ນັກລົງທຶນ ເຂົ້າມາມີບົດບາດສຳຄັນໃນການຂະຫຍາຍຕົວຂອງ ເສດຖະກິດພາຍໃນປະເທດ ເນື່ອງຈາກ ປະເທດເຮົາມີ ສິດທິພິເສດທາງດ້ານພາສີຈາກກອບການຕົກລົງກັນ ລະຫວ່າງປະເທດ, ຄ່າຈ້າງງານ ແລະ ການສຳປະທານ ທີ່ດິນ ເປັນຕົ້ນ. ດັ່ງນັ້ນ, ສ ປປ ລາວ ຈຶ່ງສາມາດເຮັດ ການສົ່ງອອກ ຜະລິດຕະພັນເຂົ້າ ໄປປະເທດໃນຢູໂລບ ປະກອບມີ ປະເທດເບວຢ້ຽມ ຊຶ່ງມີມູນຄ່າການສົ່ງ ອອກ ກວມ 6.12%, ຝຣັ່ງ ກວມ 0.6%, ສະວິເດນ ກວມ 0.09%, ອີຕາລີ ກວມ 0.17%, ເຢຍລະມັນ ກວມ 0.17% ເປັນຕົ້ນ; ໃນແຖບປະເທດໃນອາຊຽນ ປະກອບມີ ປະເທດຈີນ ຊຶ່ງມີມູນຄ່າການສົ່ງອອກ ກວມ 76.08%, ຫວຽດນາມ ກວມ 16.42%; ອາເມລິກາເໜືອ ມູນຄ່າການສົ່ງອອກ ກວມ 0.04%. ແຕ່ລະປີ ຈະມີຕົວເລກການສົ່ງອອກໄປແຕ່ລະປະເທດ ແຕກຕ່າງກັນ, ລາຍລະອຽດປະເທດທີ່ນຳເຂົ້າຜະລິດຕະ ພັນເຂົ້າຈາກ ສ ປປລາວ ດັ່ງຮູບ 02 ລຸ່ມນີ້:




ຮູບ 02: ສ ປປ ລາວ ສົ່ງອອກຜະລິດຕະພັນເຂົ້າ ໃນປີ 2018

ແຫຼ່ງຂໍ້ມູນ: (Atlas of Economics Complexity, 2018)

ທີ່ຜ່ານມາ ສປປ ລາວ ສົ່ງອອກເຂົ້າໜຽວ ປະມານ 4,000 ໂຕນຕໍ່ປີ ໄປປະເທດຈີນ ດ້ວຍຂໍ້ກຳນົດຊື້-ຂາຍເຂົ້າລະຫວ່າງປະເທດ ແລະ ຕໍ່ມາປະເທດ ຈີນ ກໍ່ອະນຸມັດຊື້-ຂາຍເຂົ້າຕື່ມອີກຈາກລາວ ເປັນ 20,000 ໂຕນ. ເຂົ້າທີ່ສົ່ງອອກໄປປະເທດຈີນ ແມ່ນປູກໃນພື້ນທີ່ ແຂວງ ສະຫວັນນະເຂດ ແລະ ແຂວງ ຈຳປາສັກ. ຕັ້ງແຕ່ປີ 2000 ປະເທດລາວ ສົ່ງອອກເຂົ້າໄປຍັງ ປະເທດຫວຽດນາມ, ປະເທດໄທ, ປະເທດຈີນ ແລະ ປະເທດອື່ນໆ ຫຼາຍກວ່າ 300,000 ໂຕນ ແລະ ຜ່ານມາສົກປີ 2015-2016 ປະເທດລາວສາມາດຜະລິດເຂົ້າໄດ້ 4.12 ລ້ານໂຕນ, ສົກປີ 2016-2017 ຜະລິດເຂົ້າໄດ້ 4.12 ລ້ານໂຕນ ແລະ ຄາດວ່າປີ 2020 ຈະຜະລິດເຂົ້າໄດ້ 5 ລ້ານໂຕນ (China Daily.com.cn, 2017).

ແຂວງ ສະຫວັນນະເຂດ ເປັນແຂວງທີ່ມີຄວາມສຳຄັນເພາະເປັນທີ່ຕັ້ງຂອງເຂດເສດຖະກິດພິເສດ ແລະ ເປັນທາງຜ່ານຂອງສິນຄ້າ ແລະ ບໍລິການຕ່າງໆ ທີ່ຜ່ານດ່ານຂົວມິດຕະພາບ 2 ແລະ ດ່ານແດນສະຫວັນ, ເຮັດການສົ່ງອອກຜະລິດຕະພັນເຂົ້າເປັນການເພີ່ມມູນຄ່າໃຫ້ກັບເຂົ້າ ແລະ ເປັນການກະຈາຍຜົນຜະລິດໃຫ້ແກ່ພໍ່ແມ່ປະຊາຊົນ. ໄລຍະຜ່ານມາ ແຂວງ ສະຫວັນນະເຂດ ໄດ້ສົ່ງອອກຜະລິດຕະພັນເຂົ້າໃນແຕ່ລະປີມີການປ່ຽນແປງ ຈາກຕາຕະລາງ 01 ເຫັນວ່າ ແຂວງ ສະຫວັນນະເຂດ ໃນສົກປີ 2010-2011 ມີອັດຕາການສົ່ງອອກຜະລິດຕະພັນເຂົ້າ ຈຳນວນ 18,893 ໂຕນ ຄິດເປັນມູນຄ່າ 5,675,700 ໂດລາ ທັງໝົດນີ້ແມ່ນສົ່ງໄປປະເທດຫວຽດນາມ, ສົກປີ 2013-2014 ເຫັນວ່າ ມີການສົ່ງອອກຜະລິດຕະພັນເຂົ້າໄປປະເທດໄທ ແລະ ປະເທດຫວຽດນາມ, ໃນສົກປີ 2014-2015 ເຫັນວ່າມີການສົ່ງອອກຜະລິດຕະພັນເຂົ້າໄປ ປະເທດຈີນ ແລະ ປະເທດຫວຽດນາມ. ເມື່ອປຽບທຽບການສົ່ງອອກເຂົ້າແຕ່ລະປີ ປີ 2010 ເຖິງ 2013 ມີມູນຄ່າການສົ່ງອອກຜະລິດຕະພັນເຂົ້າມີການປ່ຽນແປງໄປໃນທິດທາງຫຼຸດລົງ.

ຕາຕະລາງ: 01 ມູນຄ່າການສົ່ງອອກເຂົ້າຂອງແຂວງສະຫວັນນະເຂດ ໄລຍະ 6 ປີ ຜ່ານມາ

| ປີ | ມູນຄ່າສົ່ງອອກ (ໂດລາ) | %ການປ່ຽນແປງ |
|---|---|---|
| 2010-2011 | 5,675,700 | - |
| 2011-2012 | 2,083,622 | - 63.29 |
| 2012-2013 | 1,729,189 | - 17.01 |
| 2013-2014 | 1,425,350 | - 17.57 |
| 2014-2015 | 4,430,589 | 210.84 |
| 2015-2016 | 6,832,945 | 54.22 |

ແຫຼ່ງຂໍ້ມູນ: ພະແນກອຸດສະຫະກຳ-ການຄ້າ ແຂວງ, 2018

ໄລຍະຜ່ານມາຕົວເລກການສົ່ງອອກຜະລິດຕະພັນເຂົ້າມີການປ່ຽນແປງຕະຫຼອດເວລາເຖິງແມ່ນວ່າຜະລິດຕະພັນເຂົ້າຈະເປັນວັດຖຸດິບສຳຄັນຕໍ່ອຸດສະຫະກຳການກະເສດແຕ່ປະລິມານການສົ່ງອອກ ຫຼື ຄວາມຕ້ອງການປະລິມານເຂົ້າອາດມີການປ່ຽນແປງມາຈາກຫຼາຍປັດໄຈເປັນຕົ້ນລັກ ສະ ນະພາຍໃນມີການແຂ່ງຂັນກັບປະເທດຄູ່ຄ້າ, ການເພີ່ມຂຶ້ນຂອງອຸດສະຫະກຳຂອງໂລກ. ດັ່ງທີ່ກ່າວມາຂ້າງເທິງນັ້ນ, ກໍ່ຮູ້ແລ້ວວ່າແຂວງ ສະຫວັນນະເຂດ ເປັນທ່າແຮງຕົ້ນຕໍໃນການຜະລິດເຂົ້າ ເພື່ອການສົ່ງອອກຂອງປະເທດ ໂດຍສະເພາະເມືອງຈຳພອນ ແລະ ໃນກອງປະຊຸມທຸລະກິດຄັ້ງທີ 10 ຂອງວັນທີ 28 ມີນາ ປີ 2017 ມີການປຶກສາຫາລືເລື່ອງບັນຫາການອຳນວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງ ໃນ ສປປ ລາວ ກໍ່ຄືບັນຫາການນຳເຂົ້າສິນຄ້າ ແລະ ວັດຖຸດິບທີ່ໄດ້ຮັບການຍົກເວັ້ນພາສີ, ລາຄາຂົນສົ່ງສິນຄ້າພາຍໃນ ແລະຕ່າງປະເທດ, ຂັ້ນຕອນການອະນຸຍາດຂົນສົ່ງສຳລັບສິນຄ້າຜ່ານແດນ. ດັ່ງນັ້ນ, ຈາກເຫດຜົນທີ່ກ່າວມາກໍ່ອາດສາມາດມີຜົນກະທົບຕໍ່ຜູ້ປະກອບການສົ່ງອອກຜະລິດຕະພັນເຂົ້າພາຍໃນຂອງ ແຂວງ ສະຫວັນະເຂດເຊັ່ນກັນ, ຜູ້ສຶກສາເຫັນຄວາມສຳຄັນກ່ຽວກັບສະພາບຕະຫຼາດຜະລິດຕະພັນເຂົ້າເພື່ອເຮັດໃຫ້ຮູ້ເຖິງສະພາບການສົ່ງອອກເຂົ້າ ແລະ ຄວາມສາມາດໃນການສົ່ງອອກຜະລິດ ຕະພັນເຂົ້າຂອງແຂວງສະຫວັນນະເຂດ.

ການສຶກສາຄັ້ງນີ້ມີຈຸດປະສົງ: ເພື່ອອະທິບາຍສະພາບການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ, ເພື່ອປະເມີນຄວາມອາດສາມາດໃນການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ແລະ ເພື່ອວິເຄາະປັດໄຈທີ່ມີຜົນກະທົບຕໍ່ມູນຄ່າການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫັວນນະເຂດ.

**ສົມມຸດຖານໃນການວິໄຈ:**

- ລາຄາຈະມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັບມູນຄ່າການສົ່ງອອກເຂົ້າ.
- ອັດຕາແລກປ່ຽນເງິນກີບທຽບໃສ່ເງິນໂດລາມີຄວາມສຳພັນໃນທິດທາງດຽວກັນກັບມູນຄ່າສົ່ງອອກເຂົ້າ.
- ດັດສະນີລາຄາການບໍລິໂພກເຂົ້າມີຄວາມສຳພັນໃນທິດທາງດຽວກັນກັບມູນຄ່າການສົ່ງອອກເຂົ້າ.
- ອັດຕາເງິນເຟີ້ຈິ່ງມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັນກັບມູນຄ່າການສົ່ງອອກເຂົ້າ.
- ອັດຕາດອກເບ້ຍມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັນກັບມູນຄ່າການສົ່ງອອກເຂົ້າ.
- ເມື່ອປະລິມານການສົ່ງອອກຜະລິດຕະພັນເຂົ້າຂອງແຂວງເພີ່ມຂຶ້ນຈະເຮັດໃຫ້ມູນຄ່າການສົ່ງອອກເຂົ້ານັ້ນເພີ່ມຂຶ້ນ.

- ເມື່ອລາຄານ້ຳມັນຂຶ້ນສົ່ງສິນຄ້າເພີ່ມຂຶ້ນຈະສົ່ງຜົນ ໃຫ້ມູນຄ່າການສົ່ງອອກເຂົ້າຫຼຸດລົງ.

**ຂອບແນວຄວາມຄິດ**




ຮູບ 03: ຂອບແນວຄວາມຄິດໃນການສຶກສາ

## 2. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ແມ່ນໃຊ້ຂໍ້ມູນທຸຕິຍະພູມເປັນຫຼັກ ແລະ ສ້າງແບບຟອມສຳພາດພະນັກງານວິຊາການ ເພື່ອຖາມຂໍ້ມູນທີ່ກ່ຽວພັນກັບການສົ່ງອອກຜະລິດຕະພັນເຂົ້າພາຍຫຼັງເກັບຂໍ້ມູນຮຽບຮ້ອຍແລ້ວຈະໄດ້ທຳການວິເຄາະຂໍ້ມູນດ້ວຍການປຽບທຽບຕົວເລກການປ່ຽນແປງຂອງການນຳເຂົ້າ-ສົ່ງອອກຂອງແຕ່ລະປີດ້ວຍຄ່າຄວາມຖີ່, ເປີເຊັນ, ຄ່າສູງສຸດ, ຄ່າຕ່ຳສຸດ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເພື່ອອະທິບາຍພາບລວມຂອງບັນດາຕົວປ່ຽນທີ່ໄດ້ນຳມາວິເຄາະ ຈາກນັ້ນກໍ່ຈະອະທິບາຍໃນຮູບແບບຕາຕະລາງ ແລະ ເສັ້ນສະແດງ, ການວິເຄາະຄວາມໄດ້ປຽບໃນການສົ່ງອອກ ໂດຍການປຽບທຽບມູນຄ່າການສົ່ງອອກ ແລະ ນຳເຂົ້າສິນຄ້າລະຫວ່າງແຂວງທຽບໃສ່ຂອງປະເທດ, ການປຽບທຽບລະຫວ່າງມູນຄ່າການສົ່ງອອກເຂົ້າຂອງປະເທດລາວ ກັບປະເທດອື່ນ (Balassa, 1989).ເຊິ່ງມີສູດຄິດໄລ່ດັ່ງນີ້:

$$RCA = \frac{\left(\frac{X_{ij}}{X_i}\right)}{\left(\frac{X_{wj}}{X_w}\right)}$$

RCA ຄື ດັດສະນີຄວາມໄດ້ປຽບໂດຍປຽບທຽບຂອງສິນຄ້າ j ຂອງປະເທດ i ໃນປະເທດ W

$X_{ij}$ ຄື ມູນຄ່າການສົ່ງອອກສິນຄ້າ j ຂອງປະເທດ i ໄປຍັງປະເທດ W

$X_i$ ຄື ມູນຄ່າການສົ່ງອອກທັງໝົດຂອງປະເທດ i ໄປຍັງປະເທດ W

$X_{wj}$ ຄື ມູນຄ່າການນຳເຂົ້າສິນຄ້າ j ຂອງປະເທດ W

$X_w$ ຄື ມູນຄ່າການນຳເຂົ້າສິນຄ້າທັງໝົດ ຂອງປະເທດ W ໃນນີ້

j ຄື ປະເພດສິນຄ້າທີ່ສົ່ງອອກ

i ຄື ປະເທດຜູ້ສົ່ງອອກສິນຄ້າແຕ່ລະຊະນິດ

W ຄື ປະເທດຜູ້ນຳເຂົ້າສິນຄ້າແຕ່ລະຊະນິດ

ວິເຄາະສ່ວນແບ່ງຕະຫຼາດຄົງທີ່ດ້ວຍການໃຊ້ 3 ປັດໄຈທີ່ມີຜົນຕໍ່ຄວາມສາມາດໃນການສົ່ງອອກ ຄື Growth Effect, Commodity Effect ແລະ Competitiveness Effect

ສູດການຄິດໄລສ່ວນແບ່ງຕະຫຼາດຄົງທີ່ (Ichikawa, 2014) ມີດັ່ງນີ້:

$$X_t - X_0 = mX_0 + SUM\ [(m_i - m)X_{i0}] + SUM\ [X_{it} - X_{i0} - m_iX_{i0}]$$

| | | | |
|---|---|---|---|
| $X_t$ | ມູນຄ່າການນຳເຂົ້າໂດຍລວມຂອງຈີນ ຈາກແຂວງສະຫວັນນະເຂດ ໃນປີ 2018 | $m_i$ | ອັດຕາການຈະເລີນເຕີບໂຕຂອງການນຳເຂົ້າຜະລິດຕະພັນເຂົ້າຂອງຈີນ ແຕ່ປີ 2015-2018 |
| $X_0$ | ມູນຄ່າການນຳເຂົ້າໂດຍລວມຂອງຈີນ ຈາກແຂວງສະຫວັນນະເຂດ ໃນປີ 2015 | $X_{it}$ | ມູນຄ່າການນຳເຂົ້າຜະລິດຕະພັນເຂົ້າຂອງຈີນຈາກແຂວງສະຫວັນນະເຂດ ໃນປີ 2018. |
| m | ອັດຕາການຈະເລີນເຕີບໂຕຂອງການນຳເຂົ້າສິນຄ້າທັງໝົດຂອງຈີນ ແຕ່ປີ 2015-2018 | $X_{i0}$ | ມູນຄ່າການນຳເຂົ້າຜະລິດຕະພັນເຂົ້າຂອງຈີນຈາກແຂວງສະຫວັນນະເຂດ ໃນປີ 2015 |

ເຊິ່ງວ່າ:

| | |
|---|---|
| mX0 | Growth Effect |
| SUM [(mi -m)Xi0] | Commodity Effect |
| SUM [Xit - Xi0- miXi0] | Competitiveness Effect |

ໃນນີ້ການວິເຄາະຂໍ້ມູນແບບປະລິມານເປັນການທົດສອບປັດໃຈທາງເສດຖະກິດທີ່ມີຜົນຕໍ່ມູນຄ່າການສົ່ງອອກເຂົ້າດ້ວຍແບບຈຳລອງສົມຜົນຖົດຖອຍແບບພະຫຸຄູນ(Multiple Regression).

$$VAL = a + b_1PRI + b_2EXC + b_3INF + b_4INT + b_5IND + b_6VOL + b_7FUE + e_1$$

## 3. ຜົນໄດ້ຮັບ

ແຂວງ ສະຫວັນນະເຂດ ໄລຍະ 4 ປີ ຜ່ານມາ ປີ 2015-2018 ມີການສົ່ງອອກເຂົ້າ ໄປຍັງປະເທດຕ່າງໆ ຫຼາຍກວ່າ 15 ປະເທດທົ່ວໂລກ. ໃນນັ້ນ ຈາກການລາຍງານທາງສະຖິຕິຂອງ ພະແນກອຸດສະຫະກຳ ແລະ ການຄ້າ ພົບວ່າ ແຂວງສະຫວັນນະເຂດ ໄດ້ສົ່ງອອກເຂົ້າໄປຫຼາຍກວ່າໝູ່ ແມ່ນບັນດາປະເທດໃນແຖບທະວີບຢູໂລບເປັນສ່ວນໃຫຍ່ເຊັ່ນ: ປະເທດເບວຢ້ຽມ, ເຢຍລະມັນ, ຝຣັ່ງ, ເນເທີແລນ ເປັນຕົ້ນ; ສ່ວນປະເທດໃນເຂດທະວີບອາຊີ ແມ່ນປະເທດ ຈີນ, ໄທ, ຫວຽດນາມ ແລະ ຮ່ອງກົງ. ເຊິ່ງລາຍລະອຽດໃນການສົ່ງອອກແມ່ນສາມາດຍົກໃຫ້ເຫັນຢ່າງຊັດເຈນດັ່ງທີ່ສະແດງໃນຕາຕະລາງ 03

ຕາຕະລາງ: 03 ມູນຄ່າການສົ່ງອອກເຂົ້າຂອງແຂວງສະຫວັນນະເຂດແຕ່ປີ 2015-2018

| ປະເທດ | 2015 | 2016 | 2017 | 2018 |
|---|---|---|---|---|
| ຈີນ | 159,588 | 2,213,912 | 5,116,591 | 5,648,135 |
| | (2.76) | (31.92) | (56.14) | (68.86) |
| ໄທ | 3,164,184 | - | - | - |
| | (54.81) | - | - | - |
| ເນເທີແລນ | 225,950 | 2,157,600 | 137,085 | 63,241 |
| | (3.91) | (31.11) | (1.50) | (0.77) |

| ປະເທດ | 2015 | 2016 | 2017 | 2018 |
|---|---|---|---|---|
| ເບວຢ້ຽມ | 18,275 | 1,326,315 | 3,687,150 | 2,145,785 |
| | (0.32) | (19.13) | (40.45) | (26.16) |
| ຝລັ່ງເສດ | 340,512 | 508,219 | 48,490 | 37,250 |
| | (5.90) | (7.33) | (0.53) | (0.45) |
| ອື່ນໆ | 1,864,038 | 728,736 | 125,382 | 307,951 |
| | (32.29) | (10.51) | (1.38) | (3.75) |
| ລວມ | 5,772,546 | 6,934,783 | 9,114,698 | 8,202,362 |
| | (100) | (100) | (100) | (100) |

ແຫຼ່ງທີ່ມາ: ພະແນກອຸດສາຫະກຳ-ການຄ້າ, (2018)

ນອກນັ້ນຜົນຈາກການສຶກສາຍັງພົບວ່າແຂວງ ສະຫວັນນະເຂດ ໃນໄລຍະຜ່ານມາແຕ່ ປີ 2015-2018 ມີມູນຄ່າການສົ່ງອອກເປັນປະເພດເຂົ້າສານໜຽວມີມູນຄ່າການສົ່ງອອກເຂົ້າຫຼາຍທີ່ສຸດ, ຮອງລົງມາແມ່ນສົ່ງອອກປະເພດເຂົ້າສານໜຽວເມັດ, ເຂົ້າຈ້າວ , ເຂົ້າຈ້າວເມັດທັກ ແລະ ປະເພດເຂົ້າຈ້າວຫອມສະຫວັນ.

ຕາຕະລາງ: 04 ມູນຄ່າການສົ່ງອອກເຂົ້າແຍກຕາມປະເພດ

| ປະເພດເຂົ້າທີ່ສົ່ງອອກ (ຫົວໜ່ວຍໂດລາສະຫະລັດ) | | | | | |
|---|---|---|---|---|---|
| | ປະເພດເຂົ້າ | 2015 | 2016 | 2017 | 2018 |
| 1 | ເຂົ້າສານຈ້າວ | 1,869,465 | 792,290 | 5,083 | 69,065 |
| | | (32.39) | (11.42) | (0.06) | (0.84) |
| 2 | ເຂົ້າສານໜຽວ | 3,279,424 | 4,525,268 | 5,259,777 | 5,952,422 |
| | | (56.81) | (65.25) | (57.71) | (72.57) |
| 3 | ເຂົ້າສານໜຽວເມັດທັກ | 464,070 | - | 3,849,838 | 2,180,875 |
| | | (8.04) | - | (42.24) | (26.59) |
| 4 | ເຂົ້າສານຈ້າວຫອມສະຫວັນ | 159,588 | 373,100 | - | - |
| | | (2.76) | (5.38) | | |
| 5 | ເຂົ້າສານຈ້າວເມັດທັກ | - | 1,244,125 | - | - |
| | | - | (17.94) | | |
| | ລວມ | 5,772,546 | 6,934,783 | 9,114,698 | 8,202,362 |

ແຫຼ່ງທີ່ມາ: (ພະແນກອຸດສາຫະກຳ-ການຄ້າ, 2018)

ປະລິມານການສົ່ງອອກເຂົ້າຂອງ ແຂວງ ສະຫວັນນະເຂດ ໃນປີ 2015 ແຕ່ເດືອນ ມັງກອນ ຫາ ເດືອນ ມີນາ ມີປະລິມານການສົ່ງອອກເກືອບເທົ່າກັນ, ເດືອນ ເມສາ ເຫັນວ່າມີປະລິມານການສົ່ງອອກ ເພີ່ມຂຶ້ນຢ່າງຊັດເຈນເນື່ອງຈາກວ່າ ໃນໄລຍະນັ້ນໄດ້ມີການເລີ່ມສົ່ງອອກເຂົ້າ ຄັ້ງທຳອິດໄປຍັງປະເທດໄທ ເຊິ່ງໃນເດືອນດັ່ງກ່າວມີການສົ່ງອອກ ຈຳນວນ 29 ຄັ້ງ, ຕໍ່ມາ ເດືອນ ພຶດສະພາ ຫາ ເດືອນ ກັນຍາ ເຫັນວ່າ

ປະລິມານການສົ່ງອອກເຂົ້າຂອງ ແຂວງ ສະຫວັນນະເຂດ ຫຼຸດລົງເນື່ອງຈາກວ່າ ເປັນຊ່ວງທີ່ທາງບໍລິສັດໄດ້ມີການເກັບຊື້ເຂົ້ານຳພໍ່ແມ່ປະຊາຊົນ ແລະ ລະຫວ່າງເດືອນ ຕຸລາ ຫາ ເດືອນ  ພະຈິກ ມີປະລິມານການສົ່ງອອກທີ່ເພີ່ມຂຶ້ນສູງ ເຊິ່ງສູງທີ່ສຸດໃນປີ 2015 ເນື່ອງຈາກວ່າ ປະເທດໄທມີຄວາມຕ້ອງການເຂົ້າສານໜຽວຈຳນວນຫຼາຍ ເພື່ອການບໍລິໂພກພາຍໃນ ເຊິ່ງມີຈຳນວນການນຳເຂົ້າ ປະມານ 36 ຄັ້ງ ໃນລະຫວ່າງເດືອນນັ້ນ ແຕ່ປະລິມານການສົ່ງອອກໄປຍັງບັນດາປະເທດໃນຢູໂລບ ພັດຫຼຸດລົງ ເນື່ອງຈາກວ່າເສດຖະກິດ EU ໃນປີ 2015 ມີແນວໂນ້ມການຫຼຸດລົງສາເຫດມາຈາກ ກົດໝາຍການນຳເຂົ້າຂອງ EU ມີຄວາມເຂັ້ມງວດໃນການກວດສອບຄຸນນະພາບຂອງສິນຄ້າ.




ຮູບ 04: ປະລິມານການສົ່ງອອກເຂົ້າ ໃນ 12 ເດືອນ )2015-2018) (ຫົວໜ່ວຍ: ໂຕນ)

ຄວາມສາມາດໃນການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ໃນຕະຫຼາດຈີນ, ສາເຫດທີ່ເລືອກປະເທດຈີນມາປຽບທຽບເລື່ອງການສົ່ງອອກ ເນື່ອງຈາກວ່າ ປະເທດຈີນເປັນປະເທດທີ່ສຳຄັນ ແລະ ນຳເຂົ້າຜະລິດຕະພັນເຂົ້າໃນແຕ່ລະປີສູງກວ່າປະເທດອື່ນ ທີ່ແຂວງສະຫວັນນະເຂດ ມີການສົ່ງອອກໄປນັ້ນ. ຈາກຜົນການວິເຄາະຄ່າດັດສະນີຄວາມໄດ້ປຽບໂດຍປຽບທຽບ RCA ໂດຍການຄິດໄລ່ລະຫວ່າງປີ 2015 ຫາ 2018 ດັ່ງຮູບ 3 ພົບວ່າ ດັດສະນີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໂດຍລວມຂອງແຂວງສະຫວັນນະເຂດໄປຍັງປະເທດຈີນ ມີຄ່າຫຼາຍກວ່າ 1 ສະແດງວ່າແຂວງສະຫວັນນະເຂດຢູ່ໃນຖານະທີ່ໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໄປຍັງຕະຫຼາດຈີນ.




ຮູບ 5: ດັດສະນີຄວາມໄດ້ປຽບໂດຍປຽບທຽບ (RCA) ໃນການສົ່ງອອກຜະລິດຕະພັນເຂົ້າໂດຍລວມຂອງ

ປັດໄຈທີ່ກຳນົດ ຄວາມສາມາດໃນການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ໃນຕະຫຼາດຈີນ ຈາກການວິເຄາະໃນຕາຕະລາງລຸ່ມນີ້ ໃນດ້ານປັດໄຈການຂະຫຍາຍຕົວຂອງຕະຫຼາດ Growth Effect) ແລະ ປັດໄຈຄວາມ ສາມາດດ້ານ ການແຂ່ງຂັນ (Competitiveness Effect) ນັ້ນ ຈະເຫັນໄດ້ວ່າ ມູນຄ່າການສົ່ງອອກຂອງແຂວງສະຫວັນນະເຂດ ໃນຊ່ວງ 4 ປີຜ່ານມາ ໄດ້ຮັບຜົນກະທົບຈາກການຂະຫຍາຍຕົວຂອງຕະຫຼາດສິນຄ້ານຳເຂົ້າ ຫຼາຍກວ່າຄວາມສາມາດໃນການແຂ່ງຂັນ, ເຊິ່ງສາເຫດທີ່ສຳຄັນສະແດງໃຫ້ເຫັນວ່າການຂະຫຍາຍຕົວຂອງການສົ່ງອອກຜະລິດຕະພັນເຂົ້າເນື່ອງມາຈາກການຂະຫຍາຍຕົວຂອງຕະຫຼາດນຳເຂົ້າ ເຊັ່ນ ການທີ່ເສດຖະກິດ ຂອງຈີນມີການຂະຫຍາຍຕົວຍ່ອມເຮັດໃຫ້ເກີດການຂະຫຍາຍຕົວຂອງຕະຫຼາດນຳເຂົ້າສິນຄ້າປະເພດເຂົ້ານຳດ້ວຍ. ສ່ວນປັດໄຈດ້ານຄວາມສາມາດດ້ານການແຂ່ງຂັນ ຈະເຫັນໄດ້ວ່າສົ່ງຜົນຕໍ່ການຂະຫຍາຍຕົວຂອງການສົ່ງອອກເຊັ່ນດຽວກັນ ອັນເນື່ອງມາຈາກແຂວງສະຫັວນນະເຂດມີຂີດຄວາມສາມາດໃນການແຂ່ງຂັນສູງ ເຊິ່ງອາດມາຈາກປັດໄຈພາຍໃນ ເຊັ່ນການເພີ່ມຂຶ້ນຂອງປະສິດທິພາບໃນການຜະລິດເຮັດໃຫ້ຕົ້ນທຶນການຜະລິດຕ່ຳ, ຜູ້ປະກອບການສາມາດຂາຍສິນຄ້າໄດ້ໃນລາຄາທີ່ຕ່ຳລົງ ເຮັດໃຫ້ຂີດຄວາມສາມາດໃນການແຂ່ງຂັນສູງຂຶ້ນ ຫຼື ອາດຈະມາຈາກປັດໄຈພາຍນອກ ເຊັ່ນການອ່ອນຄ່າເງິນສະກຸນພາຍໃນແຂວງເຮັດໃຫ້ຜູ້ປະກອບການມີຂີດຄວາມສາມາດໃນການແຂ່ງຂັນເພີ່ມຂຶ້ນ ເປັນຕົ້ນ.

ຕາຕະລາງ: 05 ປັດໄຈທີ່ມີຜົນຕໍ່ການສົ່ງອອກເຂົ້າ

| ຜູ້ສົ່ງອອກ | ຄວາມສາມາດ ສົ່ງອອກ* | ປັດໄຈທີ່ມີຜົນຕໍ່ຄວາມສາມາດໃນການສົ່ງອອກຜະລິດຕະພັນເຂົ້າ ໂດຍລວມ | | |
|---|---|---|---|---|
| | | Growth Effect | Commodity Effect | Competitiveness Effect |
| ແຂວງ ສະຫວັນນະເຂດ | 316,976,794 | 314,938,540 | - 3,440,717 | 5,478,972 |

ການທົດສອບການພົວພັນລະຫວ່າງມູນຄ່າເຂົ້າທີ່ສົ່ງອອກຂອງແຂວງ ສະຫວັນນະເຂດກັບບັນດາປັດໄຈທີ່ເຮັດໃຫ້ມູນຄ່າເຂົ້າທີ່ສົ່ງອອກ ແຂວງ ສະຫວັນນະເຂດມີການປ່ຽນແປງ ຈາກການຄຳນວນສົມຜົນດ້ວຍວິທີກຳລັງສອງນ້ອຍສຸດ (OLS) ເຫັນວ່າ ການກວດສອບຄວາມສຳພັນລະຫວ່າງຕົວປ່ຽນດ້ວຍກັນໃນສົມຜົນເຫັນວ່າມີການພົວພັນກັນ, ຈາກການສັງເກດຜົນການວິເຄາະສົມຜົນເຫັນວ່າ ຄ່າສະຫະສຳພັນ R = 0.94 ໝາຍຄວາມວ່າບັນດາຕົວປ່ຽນອິດສະຫຼະ ມີຄວາມສຳພັນກັບມູນຄ່າເຂົ້າທີ່ສົ່ງອອກ ເຊິ່ງມີລະດັບການພົວພັນ 94%. ຄ່າສຳປະສິດການຕັດສິນໃຈ ( $R^2$) = 0.88 ໝາຍເຖິງບັນດາຕົວປ່ຽນອິດສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ 88% ແລະ ຄ່າ F = 44.33, P-value = 0.000 ສະແດງໃຫ້ເຫັນວ່າສົມຜົນສາມາດໃຊ້ໄດ້ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແລະ ບັນດາຕົວປ່ຽນອິດສະຫຼະຕ່າງໆມີຄວາມສຳພັນກັບຕົວປ່ຽນຕາມ ບາງຕົວ. ດັ່ງນັ້ນ, ເຮົາສາມາດຂຽນສົມຜົນຖົດຖອຍຂອງການປ່ຽນແປງຂອງມູນຄ່າເຂົ້າທີ່ສົ່ງອອກຂອງ ແຂວງ ສະຫວັນນະເຂດໄດ້ດັ່ງນີ້:

$$VAL = 146.28 + 0.0016\,VOL + 150.75\text{IND} - 352.41\text{INF}$$

## 4. ວິພາກຜົນ

ເມື່ອພິຈາລະນາໂດຍປຽບທຽບພົບວ່າ ແຂວງ ສະຫວັນນະເຂດໄດ້ຮັບປະໂຫຍດຈາກການເຕີບໂຕຂອງຕະຫຼາດນຳເຂົ້າສິນຄ້າ ຄິດເປັນມູນຄ່າສະເລ່ຍເທົ່າກັບ 316,976,794 ໂດລາ ແລະ ການຂະຫຍາຍຕົວຂອງຄວາມສາມາດໃນການແຂ່ງຂັນ ຄິດເປັນມູນຄ່າສະເລ່ຍເທົ່າກັບ 5,478,972 ໂດລາ. ແຕ່ເມື່ອພິຈາລະນາຄວາມຕ້ອງການຜະລິດຕະພັນ (Commodity Effect) ແລ້ວ ຈະເຫັນໄດ້ວ່າ ມູນຄ່າການສົ່ງອອກຂອງແຂວງສະຫວັນນະເຂດ ໄດ້ຮັບຜົນປະໂຫຍດຫຼຸດລົງຈາກສ່ວນນີ້ ໃນຊ່ວງ 4 ປີຜ່ານມາ ໂດຍການຂະຫຍາຍຕົວຂອງມູນຄ່າສົ່ງອອກເຂົ້າອັນເນື່ອງມາຈາກຄວາມຕ້ອງການຜະລິດຕະພັນເຂົ້າໄດ້ຫຼຸດລົງ ຄິດເປັນມູນຄ່າສະເລ່ຍ 3,440,717 ໂດລາ. ນັ້ນສະແດງໃຫ້ເຫັນວ່າຄວາມຕ້ອງການບໍລິໂພກເຂົ້າຂອງຄົນຈີນຈາກແຂວງສະຫວັນນະເຂດທີ່ຜ່ານມາ ບໍ່ເປັນປັດໄຈສຳຄັນຕໍ່ການເພີ່ມຂຶ້ນຂອງມູນຄ່າການສົ່ງອອກຜະລິດຕະພັນເຂົ້າໂດຍລວມຂອງແຂວງສະຫວັນນະເຂດ.

ຂໍ້ມູນປະລິມານເຂົ້າທີ່ສົ່ງອອກຂອງ ແຂວງ ສະຫັວນນະເຂດ ໄລຍະ 4 ແຕ່ປີ 2015 ຫາ 2018 ຊຶ່ງໃຊ້ຂໍ້ມູນເປັນລາຍເດືອນ ມີ 48 ເດືອນ ເຫັນວ່າ ໃນເດືອນ ກຸມພາ ແລະ ມີນາ ປີ 2017 ແລະ ເດືອນເມສາ ປີ 2018 ແຂວງ ສະຫວັນນະເຂດ ບໍ່ມີການສົ່ງອອກເຂົ້າໄປຕ່າງປະເທດ,ແຂວງ ສະຫວັນນະເຂດ ມີການສົ່ງອອກເຂົ້າ ສູງສຸດ ຈຳນວນ 4,000 ໂຕນຕໍ່ເດືອນ ຊຶ່ງເກີດຂຶ້ນໃນເດືອນ ທັນວາ ປີ 2017 ສ່ວນຫຼາຍຈະສົ່ງໄປປະເທດຈີນ ກວມ 80% ຂອງປະມານເຂົ້າທີ່ສົ່ງອອກທັງໝົດໃນເດືອນດັ່ງກ່າວ. ຄ່າສະເລ່ຍລວມຂອງປະລິມານເຂົ້າທີ່ສົ່ງອອກແມ່ນ 1,102.8 ໂຕນຕໍ່ເດືອນ ຊຶ່ງຄວາມແຕກຕ່າງຂອງປະລິມານເຂົ້າໂດຍສະເລ່ຍທີ່ສົ່ງອອກໄປແຕ່ລະເດືອນ 909.3 ໂຕນຕໍ່ເດືອນ.

ໃນການທົດສອບສົມຜົນຖົດຖອຍເຫັນວ່າ ປະລິມານການສົ່ງອອກຜະລິດຕະພັນເຂົ້າມີຄວາມສຳພັນໃນທິດທາງດຽວກັນ ໝາຍຄວາມວ່າ ເມື່ອປະລິມານການສົ່ງອອກເຂົ້າໃຂອງແຂວງສະຫວັນນະເຂດ ເພີ່ມຂຶ້ນ 1 ໜ່ວຍ ຈະສົ່ງຜົນໃຫ້ມູນຄ່າການສົ່ງອອກຜະລິດຄະພັນເຂົ້າ ເພີ່ມຂຶ້ນ 0.016 ໂດລາ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເຊິ່ງສອດຄ່ອງກັບງານວິໄຈຂອງ ກຽດຕິສັກ (2010), ດັດສະນີລາຄາການບໍລິໂພກໝວດສະບຽງອາຫານມີຄວາມສຳພັນໃນທິດທາງດຽວກັນ ໝາຍຄວາມວ່າ ເມື່ອດັດສະນີລາຄາການບໍລິໂພກໝວດສະບຽງອາຫານແຂວງສະຫວັນນະເຂດ ເພີ່ມຂຶ້ນ 1 ໜ່ວຍ ຈະສົ່ງຜົນໃຫ້ມູນຄ່າການສົ່ງອອກຜະລິດຄະພັນເຂົ້າ ເພີ່ມຂຶ້ນ 150.76 ໂດລາ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເຊິ່ງສອດຄ່ອງກັບງານວິໄຈຂອງ (ສຸກັນຍາ, 2010) ແລະ

ງານວິໄຈຂອງ (ພົດຈະນິນ ແລະ ຄະນະ, 2016) ແລະ ອັດຕາການປ່ຽນແປງລວມຂອງເງິນເຟີແຂວງສະຫວັນນະເຂດ ມີຄວາມສຳພັນໃນທິດທາງກົງກັນຂ້າມກັນ ໝາຍຄວາມວ່າ ເມື່ອອັດຕາການປ່ຽນແປງລວມຂອງເງິນເຟີແຂວງສະຫວັນນະເຂດ ເພີ່ມຂຶ້ນ 1 ໜ່ວຍ ຈະສົ່ງຜົນໃຫ້ມູນຄ່າການສົ່ງອອກຜະລິດຕະພັນເຂົ້າ ຫຼຸດລົງ 352.41 ໂດລາ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເຊິ່ງສອດຄ່ອງກັບ (ກຽດຕິສັກ, 2010).

## 5. ສະຫຼຸບຜົນ

ຈາກຜົນການສຶກສາເຫັນວ່າ ສະພາບການສົ່ງອອກຜະລິດ ຕະພັນເຂົ້າຂອງແຂວງສະຫວັນນະເຂດ ຈາກປະມານການສົ່ງອອກເຂົ້າ ໃນ 9 ບໍລິສັດຂອງແຂວງ ສະຫວັນນະເຂດ ໃນໄລຍະ 4 ປີ ລວມທັງໝົດມີຈຳນວນ 52,936.17 ໂຕນ ແລະ ມີມູນຄ່າ 30,024,389.08 ໂດລາ, ບໍລິສັດທີ່ມີຈຳນວນການສົ່ງອອກເຂົ້າຫຼາຍທີ່ສຸດແມ່ນ ບໍລິສັດ ຊວນເຢ (ລາວ) ຈຳກັດຜູ້ດຽວ ຊຶ່ງມີຈຳນວນ19,733.48 ໂຕນ ມີມູນຄ່າທັງໝົດຈຳນວນ 13,138,226.20 ໂດລາ ແລະ ບໍລິສັດ ທີ່ມີຈຳນວນການສົ່ງອອກເຂົ້າໜ້ອຍທີ່ສຸດແມ່ນ ບໍລິສັດ ຈິນຕະນາການ ຂາອອກ-ຂາເຂົ້າ ຊຶ່ງມີຈຳນວນການສົ່ງອອກພຽງແຕ່ 44.10 ໂຕນ ຊຶ່ງມີມູນຄ່າພຽງແຕ່ 13,475.00 ໂລດາ, ປະລິມານ ແລະ ມູນຄ່າການສົ່ງອອກແຂົ້າຂອງແຂວງ ສະຫວັນນະເຂດ ໄປຕ່າງປະເທດ ຊຶ່ງລວມທັງໝົດມີ 15 ປະເທດຊຶ່ງເຫັນວ່າ ການສົ່ງອອກເຂົ້າຂອງ ແຂວງ ສະຫວັນນະເຂດ ໄປຕ່າງປະເທດ ຊຶ່ງມີການສົ່ງອອກເຂົ້າໄປຫຼາຍທີ່ສຸດແມ່ນສົ່ງໄປປະເທດຈີນມີມູນຄ່າ 13,138,266.20 ໂດລາ ແລະ ການສົ່ງອອກເຂົ້າໜ້ອຍທີ່ສຸດ ແມ່ນສົ່ງໄປປະເທດ ອື່ນໆ ຊຶ່ງມີມູນຄ່າພຽງແຕ່ 58,763.00 ໂດລາ, ໃນສ່ວນຂອງປະເພດເຂົ້າທີ່ແຂວງ ສະຫວັນນະເຂດ ສົ່ງອອກໄປຕ່າງປະເທດ ເຫັນໄດ້ວ່າ ປະເພດເຂົ້າສານໜຽວເປັນປະເພດທີ່ມີການສົ່ງອອກຫຼາຍທີ່ສຸດ ຊຶ່ງມີມູນຄ່າທັງໝົດ 19,057,856.78 ໂດລາ ກວມເອົາເຖິງ 63,47%. ຄວາມສາມາດໃນການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ໃນຕະຫຼາດຈີນ, ຈາກຜົນການວິເຄາະຄ່າດັດສະນີຄວາມໄດ້ປຽບໂດຍປຽບທຽບ RCA ໂດຍການຄິດໄລ່ລະຫວ່າງປີ 2015 ຫາ 2018 ພົບວ່າ ດັດສະນີຄວາມໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໂດຍລວມຂອງແຂວງສະຫວັນນະເຂດໄປຍັງປະເທດຈີນ ມີຄ່າຫຼາຍກວ່າ 1 ສະແດງວ່າແຂວງສະຫວັນນະເຂດຢູ່ໃນຖານະທີ່ໄດ້ປຽບໂດຍປຽບທຽບໃນການສົ່ງອອກຜະລິດຕະພັນເຂົ້າໄປຍັງຕະຫຼາດຈີນ.

ຜົນວິເຄາະສ່ວນແບ່ງຕະຫຼາດຄົງທີ່ ພົບວ່າປັດໄຈການຂະຫຍາຍຕົວຂອງຕະຫຼາດ ແລະ ປັດໄຈຄວາມສາມາດໃນການແຂ່ງຂັນ ມີຜົນກະທົບຕໍ່ການປ່ຽນແປງຂອງມູນຄ່າການສົ່ງອອກຜະລິດຕະພັນເຂົ້າ ເຊິ່ງມີມູນຄ່າເທົ່າກັບ 314,938,540 ໂດລາ ແລະ 5,478,972 ໂດລາ ຕາມລຳດັບຈາກການສຶກສາປັດໄຈທາງເສດຖະກິດທີ່ມີຜົນຕໍ່ມູນຄ່າການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ພົບວ່າປັດໄຈທີ່ມີຄວາມສຳພັນກັບມູນຄ່າການສົ່ງອອກປະກອບມີ ປະລິມານການສົ່ງອອກຜະລິດຕະພັນເຂົ້າ, ດັດສະນີລາຄາການບໍລິໂພກໝວດສະບຽງອາຫານ ແລະ ອັດຕາການປ່ຽນແປງລວມຂອງເງິນເຟີແຂວງສະຫວັນນະເຂດ ເຊິ່ງມີລະດັບການພົວພັນ 94% ແລະ ທັງສາມຕົວປ່ຽນອິດສະຫຼະ ສາມາດອະທິບາຍມູນຄ່າການສົ່ງອອກຜະລິດຕະພັນເຂົ້າໄດ້ 88% ແລະ ຄ່າ F = 44.33, Sig ຂອງ F = 0.000 ສະແດງໃຫ້ເຫັນວ່າ ສົມຜົນສາມາດໃຊ້ໄດ້ ດ້ວຍລະດັບຄວາມເຊື່ອໝັ້ນ 95%. ເມື່ອອະທິບາຍຄວາມສຳພັນແຕ່ລະຕົວປ່ຽນເຫັນວ່າ ປະລິມານການສົ່ງອອກຜະລິດຕະພັນເຂົ້າມີຄວາມສຳພັນໃນທິດທາງດຽວກັນກັບມູນຄ່າການສົ່ງອອກ ແລະ ເປັນໄປຕາມທິດສະດີ ທີ່ວ່າ ເມື່ອປະເທດສາມາດຜະລິດເຂົ້າໄດ້ຫຼາຍຂຶ້ນເທົ່າໃດ ຍິ່ງມີຄວາມສາມາດໃນການສົ່ງອອກຫຼາຍຂຶ້ນເທົ່ານັ້ນ ແລະ ຜົນຈາກການສົ່ງອອກຫຼາຍຈະເຮັດໃຫ້ມູນຄ່າການສົ່ງອອກ

ຫຼາຍຂຶ້ນຕາມ; ສ່ວນດັດສະນີລາຄາການບໍລິໂພກໝວດສະບຽງອາຫານ ມີຄວາມສຳພັນໃນທິດທາງດຽວກັນກັບມູນຄ່າການສົ່ງອອກຜະລິດຕະພັນເຂົ້າ ແລະ ກົງຕາມທິດສະດີການວິເຄາະປັດໄຈພື້ນຖານທີ່ບອກເຖິງພຶດຕິກຳການບໍລິໂພກ ເຊິ່ງສະພາວະຕ່າງໆຈະສະທ້ອນໃນດັດສະນີຜົນຜະລິດ ແລະ ທິດສະດີອຸປະທານ ໂດຍເຮັດໃຫ້ປະລິມານການສົ່ງອອກໄປຍັງປະເທດຕ່າງໆເພີ່ມຫຼາຍຂຶ້ນ ມູນຄ່າການສົ່ງອອກກໍ່ເພີ່ມຂຶ້ນເຊິ່ງດຽວກັນ; ອັດຕາເງິນເຟີລວມຂອງແຂວງສະຫວັນນະເຂດມີຄວາມສຳພັນໃນທິດທາງກົງກັນຂ້າມກັນກັບມູນຄ່າການສົ່ງອອກຜະລິດຕະພັນເຂົ້າຂອງແຂວງສະຫວັນນະເຂດ ເນື່ອງຈາກອັດຕາເງິນເຟີສູງຂຶ້ນ ຈະເຮັດໃຫ້ຕົ້ນທຶນການຜະລິດຕ່າງໆ ເຊັ່ນ ຄ່າແຮງງານ, ຄ່າອຸປະກອນນັ້ນສູງຂຶ້ນຈະສົ່ງຜົນໃຫ້ປະລິມານການສົ່ງອກສູ່ຕະຫຼາດຫຼຸດລົງ ຍ້ອນລາຄາຜົນຜະລິດສູງຂຶ້ນຕາມ ເຮັດໃຫ້ມູນຄ່າການສົ່ງອອກຫຼຸດລົງເຊັ່ນດຽວກັນ.

## 6. ຄວາມຮູ້ບຸນຄຸນ

ໃນການສຶກສາຄັ້ງນີ້ທາງທີມງານຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງ ມະຫາວິທະຍາໄລສະຫວັນນະເຂດ ທີ່ໃຫ້ການສະໜັບສະໜູນທຶນໃນການຄົ້ນຄວ້າວິໄຈ, ຂໍຂອບໃຈມາຍັງທ່ານຮອງອະທິການບໍດີຝ່າຍຄົ້ນຄວ້າວິທະຍາສາດທີ່ໃຫ້ທິດຊີ້ນຳໃນການຂຽນບົດ ແລະ ວິເຄາະຂໍ້ມູນຕ່າງໆ, ຂໍສະແດງຄວາມຂອບໃຈມາຍັງປະຊາຊົນທີ່ໃຫ້ຄວາມຮ່ວມມືໃນການຕອບແບບສຳພາດ ແລະ ສຸດທ້າຍແມ່ນຂໍສະແດງຄວາມຮູ້ບຸນຄຸນມາຍັງບັນດາພະແນກການຕ່າງໆທີ່ຢູ່ອ້ອມຂ້າງແຂວງບໍ່ວ່າຈະເປັນພະແນກແຜນການແລະການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າໃນການສະໜອງຂໍ້ມູນຕ່າງໆຈົນສາມາດເຮັດໃຫ້ບົດຄົ້ນຄວ້າຄັ້ງນີ້ສຳເລັດຢ່າງຈົບງາມ.

## 7. ເອກະສານອ້າງອີງ


ກຽດຕິສັກ. (2010). *ປັດໄຈທີ່ມີຜົນຕໍ່ປະລິມານການສົ່ງອອກຢາງພາລາຂອງປະເທດໄທ.* ກຸງເທບມະຫານະຄອນ: ມະຫາວິທະຍາໄລທຳການຄ້າໄທ.

ສຸກັນຍາ (2010). *ປັດໄຈທາງເສດຖະກິດທີ່ມີຜົນຕໍ່ການສົ່ງອອກກຸ້ງແຊ່ຂອງໄທໄປປະເທດສະຫະລັດອາເມລິກາ ແລະ ຍີ່ປຸ່ນ.* ກຸງເທບມະຫານະຄອນ: ມະຫາວິທະຍາໄລທຳການຄ້າ.

ພົດຈະນິນ ແລະ ຄະນະ. (2016). *ປັດໄຈທາງເສດຖະກິດທີ່ມີຜົນຕໍ່ມູນຄ່າການສົ່ງອອກເຄື່ອງປະດັບຂອງປະເທດໄທ.* ອຳເພີເມືອງສົງຂາ: ມະຫາວິທະຍາໄລລາດຊະພັດສົງຂາ.

ພະແນກອຸດສາຫະກຳ-ການຄ້າ. (2018). *ສະຖິຕິການສົ່ງອອກເຂົ້າແຂວງສະຫວັນນະເຂດ.* ນະຄອນໄກສອນ: ທ່າເມືອງການພິມ.

*Atlas of Economics Complexity*. (2017, 5 25). Retrieved from Trade Visualisation z: https://atlas.cid.harvard.edu/explore?country=123&product=undefined&year=2018&productClass=HS&target=Product&partner=undefined&startYear=undefined

Balassa, B. (1989). The changing Comparative of Japan and United stated. *Trade Policy and Economic Development*, 80-104.

*China Daily.com.cn*. (2017). Retrieved from Lao to Export more rice to China: http://www.chinadaily.com.cn/business/2017-01/16/content_27966652.htm

Ichikawa (2014, July 17). *Constant market share Analysis and Open Regionalism*. Retrieved from www.ide.go.jp